# ໂຮງຮຽນວັນອາທິດ

## ວັນອາທິດ ທີ 10 ພຶສຈິກາ 2019(11-10-2019 )

## ພຣະປະສົງຂອງພຣະເຈົ້າແລະບັນຫາຂອງຂ້າພະເຈົ້າ.

ເມື່ອໃດມີການປ່ຽນແປງແຜນງານໂດຍທີ່ບໍ່ໄດ້ຄາດຫວັງໃນຄວາມຊື່ນຊອບຂອງທ່ານ?

**ຈຸດສຳຄັນໃນບົດຮຽນ**: ພຣະເຈົ້າທຳງານໃນການປະພຶດຂອງທ່ານ ແມ່ນກະທັ້ງໃນມໍຣະສຸມຂອງບັນຫາ.
**ພຣະຄັມພີຕອບສນອງຕໍ່ຊີວິດ**:

ເມື່ອເວລາທີ່ຂ້າພະເຈົ້າເປັນນັກສຶກສາທີ່ມະຫາວິທຍາລັຍ, ຂ້າພະເຈົ້າໃຊ້ເວລານຶ່ງມື້ອ່ານພຣະທັມເອຊາຢາ 53. ຂ້າພະເຈົ້າໄດ້ຮັບການດົນໃຈໂດຍຄວາມຕັ້ງໃຈຂອງພຣະຄຣິດໃຫ້ເປັນຜູ້ຮັບໃຊ້ທີ່ໄດ້ຮັບຄວາມເຈັບປວດ. ໃນຄຳຕອບ, ຂ້າພະເຈົ້າໄດ້ອະທິຖານ, " ອົງພຣະຜູ້ເປັນເຈົ້າ, ຖ້ານີ້ແມ່ນງານບໍ່ມີຄົນອື່ນເຮັດ, ຂໍພຣະອົງມອບໃຫ້ກັບຂ້ານ້ອຍດ້ວຍ." ເມື່ອຂ້າພະເຈົ້າຍອມຈຳນົນຊີວິດຂອງຂ້າພະເຈົ້າຕໍ່ການຮັບໃຊ້ພຣະເຈົ້າ, ສຽງໂທຣະສັບໄດ້ດັງຂຶ້ນ, ຂ້າພະເຈົ້າຄຶດ, ຂ້າພະເຈົ້າກຳລັງມີເວລາອັນພິເສດກັບພຣະເຈົ້າ, ຂ້າພະເຈົ້າຍັງບໍ່ຢາກໃຫ້ມັນສິ້ນສຸດລົງເທື່ອ! ແນ່ນອນແລ້ວ, ມັນເປັນຂອງຂ້າພະເຈົ້າ. ມັນແມ່ນຄົນນຶ່ງທີ່ສຳຄັນກັບການແກ້ໄຂບັນຫາໃນກຸ່ມນັກສຶກສາມະຫາວິທຍາລັຍ. ລາວໄດ້ມີຄວາມເປົ່າປ່ຽວແລະໄດ້ໂທຣະສັບເອີ້ນເອົາໝຸ່ມໂສດໃນຄຣິສຕະຈັກພວກເຮົາທຸກໆແລງ. "ບອກລາວວ່າ, ຂ້ອຍບໍ່ສາມາດຮັບໂທຣະສັບ" ຂ້າພະເຈົ້າບອກກັບເພື່ອນຮ່ວມຫ້ອງ. ແລ້ວຂ້າພະເຈົ້າອະທິຖານຕໍ່; " ພຣະເຈົ້າ, ຖ້າພຣະອົງມີງານຍາກກວ່ານີ້ທີ່ຄົນອື່ນຝືນໃຈເຮັດ, ຂໍພຣະອົງມອບໃຫ້ຂ້ານ້ອຍ!"

ເປັນເວລາສອງອາທິດຜ່ານໄປກ່ອນທີ່ຂ້າພະເຈົ້າຈະນຶກຂຶ້ນໄດ້ພຣະເຈົ້າຕອບຄຳອະທິຖານຂອງຂ້າພະເຈົ້າແມ່ນກະທັ້ງຂ້າພະເຈົ້າຍັງບໍ່ໄດ້ເວົ້າຫັຍງ" ເອແມນ!" ຂ້າພະເຈົ້າບໍ່ພຽງແຕ່ສ້າງຄວາມສຳພັນ. ສະຖານະການບໍ່ເປັນພຽງແຕ່ບັນຫາຕລອດ! ພວກເຮົາຕ້ອງຮຽນຮູ້ທີ່ຈະເຫັນການທີ່ພຣະເຈົ້າທຳງານໃນທີ່ນັ້ນ.

.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### ສຶກສາພຣະຄັມພີ

1. **1. <u>ໂຣມ 8:26- 27</u>**

*26 ໃນທຳນອງດຽວກັນນັ້ນແຫຼະ, ພຣະວິນຍານຊົງຊ່ອຍຊູເຮົາທັງຫຼາຍເມື່ອພວກເຮົາອ່ອນກຳລັງລົງ ເພາະເຮົາທັງຫຼາຍບໍ່ຮູ້ວ່າພວກເຮົາຄວນຈະອ້ອນວອນຂໍສິ່ງໃດ ແຕ່ອົງພຣະວິນຍານຊ່ວຍຂໍແທນເຮົາ ດ້ວຍການຖອດຫຸ່ນຢ່າງຫາຄຳເວົ້າບໍ່ໄດ້. 27 ແລະພຣະອົງຜູ້ຊົງສອດສ່ອງຮູ້ໃຈມະນຸດກໍຊົງຊາບຄວາມນຶກຄິດຂອງພຣະວິນຍານ ເພາະວ່າພຣະວິນຍານຊົງອ້ອນວອນຂໍສຳລັບພວກໄພ່ພົນຂອງພຣະເຈົ້າຕາມນ້ຳພຣະທັຍພຣະອົງ.*

ຊີວິດກິຈວັດປະຈຳວັນສະແດງໃຫ້ພວກເຮົາເຫັນຄວາມສັບສົນກັບເຫດການ.

- ທ່ານໝໍຄົ້ນພົບບາງສິ່ງຜິດປົກກະຕິໃນລະຫວ່າງການທຳງານປະຈຳວັນໃນຫ້ອງທົດລອງ.
- ພວກເຮົາໄດ້ຮັບຂໍ້ສເນີເລື່ອນຕຳແໜ່ງ, ແຕ່ຕ້ອງໄດ້ເດີນທາງເລື້ອຍໆ.
- ພວກເຮົາຖືກຮຽກເອີ້ນໃຫ້ຮັບໃຊ້ເປັນຜູ້ນຳໃນຄຣິສຕະຈັກຂອງເຮົາ, ແຕ່ຕາຕະລາງງານຂອງພວກເຮົາແມ່ນເຕັມແໜ້ນຢູ່ແລ້ວ.

- ພວກເຮົາເຊື່ອຟັງອັນໃດທີ່ພວກເຮົາມີຄວາມຮູ້ສຶກວ່າພຣະເຈົ້າຕ້ອງໃຫ້ພວກເຮົາເຮັດ, ພວກເຮົາເຊັ່ງຮີບກັບການປະເມີນຜົນແລະຂໍ້ບົກພ່ອງ.

ພວກເຮົາສາມາດມີຄວາມຮູ້ສຶກພ່າຍແພ້ໂດຍສະຖານະການຂອງພວກເຮົາເພາະພວກເຮົາບໍ່ຮູ້ສິ່ງທີ່ຈະເສັ່ງໄປໃນອະນາຄົດຕໍ່ໜ້າຢ່າງໃດ. ຖ້າພວກເຮົາຮູ້ອະນາຄົດຂ້າງໜ້າຈະເປັນຢ່າງໃດ, ພວກເຮົາຄວນມີການຕັດສິນໃຈດ້ວຍຄວາມເຊື່ອໝັ້ນ. ແຕ່ເພາະພວກເຮົາບໍ່ຮູ້, ພວກເຮົາຈຳຕ້ອງດຳລົງຊີວິດຢູ່ດ້ວຍຄວາມເຊື່ອ, ຄວາມໄວ້ວາງໃຈໃນບຸກຄົນຜູ້ນຶ່ງຜູ້ທີ່ຮູ້ຈັກອະນາຄົດແລະຮັກພວກເຮົາດ້ວຍຄວາມຮັກທີ່ບໍ່ມີທີ່ສິ້ນສຸດ.

ອົງພຣະຜູ້ເປັນເຈົ້າຜູ້ໃຫ້ຂໍ້ພິສູດຂ້າພະເຈົ້າກ່ຽວກັບຊີວິດການອະທິຖານຂອງຂ້າພະເຈົ້າ. ແຕ່ລະວັນຂ້າພະເຈົ້າຈະອະທິຖານເພື່ອຄອບຄົວຂອງຂ້າພະເຈົ້າ, ເພື່ອນແລະຄຣິສຕະຈັກ, ຕົວຢ່າງ, ຂ້າພະເຈົ້າຈະອະທິຖານເພື່ອລູກໆຂອງຂ້າພະເຈົ້າສາມຄົນ ແລະຂໍຮ້ອງພຣະເຈົ້າປະທານອັນໃດທີ່ຂ້າພະເຈົ້າເຫັນວ່າມັນດີສຳລັບພວກເຂົາ. ມື້ນຶ່ງຂ້າພະເຈົ້າອ່ານໜັງສືເອເຟໂຊ 3:20ກ: " ຂໍໃຫ້ພຣະກຽດຈົ່ງມີແກ່ພຣະອົງ ຜູ້ຊົງຣິດສາມາດກະທຳນອກເໜືອສາຣະພັດຫຼືຊົງສາມາດກະທຳເໜືອກ່ວາທີ່ພວກເຮົາຈະຂໍຫຼືຄຶດໄດ້." ມັນໄດ້ສ່ອງສະຫວ່າງໃສ່ໃຈຂ້າພະເຈົ້າວ່າອັນໃດທີ່ຂ້າພະເຈົ້າຂໍສຳລັບຄອບຄົວຂອງຂ້າພະເຈົ້າອາດຈະຫ່າງໄກຄວາມດີພໍກັບອັນໃດທີ່ພຣະເຈົ້າຕ້ອງການເຮັດໃຫ້ເພື່ອພວກເຂົາ.

ຂ້າພະເຈົ້າຕັດສິນໃຈວ່າຂ້າພະເຈົ້າບໍ່ຕ້ອງຄິດທີ່ຈະອະທິຖານໃຫ້ດີທີ່ສຸດສຳລັບຄອບຄົວຂອງຂ້າພະເຈົ້າ; ຂ້າພະເຈົ້າຕ້ອງການອະທິຖານຕໍ່ອັນທີ່ດີທີ່ສຸດຂອງພຣະເຈົ້າ. ນີ້ເປັນຂໍ້ໂຕ້ແຍ້ງໃນຊີວິດຂອງມະນຸດລະຫ່ວາງສອງສິ່ງນີ້! ແຕ່ເປັນທາງດຽວທີ່ຂ້າພະເຈົ້າຄວນອະທິຖານຄືຂໍສິ່ງທີ່ດີທີ່ສຸດຂອງພຣະເຈົ້າໃຫ້ກັບຄອບຄົວຂອງຂ້າພະເຈົ້າຖ້າຂ້າພະເຈົ້າຮູ້ວ່າອັນໃດເປັນສິ່ງທີ່ດີທີ່ສຸດຂອງພຣະເຈົ້າ. ແລະສຳລັບສິ່ງນັ້ນຂ້າພະເຈົ້າຈຳຕ້ອງຮຽນຮູ້ອັນໃດເປັນຄວາມຮັກແລະຄວາມຕັ້ງໃຈຂອງພຣະເຈົ້າ.

ແຕ່ພວກເຮົາຈະເຮັດຢ່າງໃດຖ້າພວກເຮົາບໍ່ຮູ້ວ້າພຣະເຈົ້າຕ້ອງການອັນໃດ? ໃນປໂຍກນີ້, ອັຄສາວົກໂປໂລໄດ້ອະທິບາຍວ່າ, " ພວກເຮົາບໍ່ຮູ້ຈະອະທິຖານອັນທີ່ພວກເຮົາຈະອະທິຖານ," ແຕ່ພຣະວິນຍານບໍຣິສຸດຮູ້. ພວກເຮົາບໍ່ໄດ້ຢູ່ໂດດດ່ຽວ! ເມື່ອພວກເຮົາອະທິຖານແລະສແວງຫາພຣະເຈົ້າ, ພຣະວິນຍານບໍຣິສຸດຂອງພຣະອົງໄດ້ຢັ່ງຮູ້ຄວາມຄຶດຂອງພວກເຮົາ. ພວກເຮົາບໍ່ມີຜູ້ໃດທີ່ອະທິຖານໄດ້ດີກ່ວາພວກເຮົາຫຼາຍໄປກ່ວາຜູ້ທີ່ຮູ້ຢ່າງຄັກແນ່ຕໍ່ຄວາມຕັ້ງໃຈແລະຈຸດປະສົງຂອງພຣະເຈົ້າ.

ພຣະວິນຍານບໍຣິສຸດຮູ້ຄວາມຮັກແລະຄວາມຕັ້ງໃຈຂອງພຣະເຈົ້າ. ພຣະອົງຊົງຮູ້ວ່າພຣະເຈົ້າຕັ້ງໃຈທຳງານໃນຊີວິດເຮົາຢ່າງໃດ. ພຣະອົງຊົງຮູ້ວ່າພຣະເຈົ້າຈະໃຊ້ເຫດການທີ່ເກີດຂຶ້ນກັບພວກເຮົາເພື່ອການດີຂອງພວກເຮົາແລະສະງ່າຣາສີຂອງພຣະເຈົ້າຢ່າງໃດ. ພຣະວິນຍານບໍຣິສຸດບໍ່ເຄີຍດຶງດູດໂດຍຄວາມແປກປລາດໃຈຫຼືງວຍງົງດ້ວຍສະພາບການຂອງເຮົາຄືກັບພວກເຮົາເຄີຍເປັນ. ພຣະອົງຈະຊົງນຳພວກເຮົາເມື່ອພວກເຮົາອະທິຖານຕໍ່ພຣະປະສົງຂອງພຣະອົງ.

## 2. <u>ໂຣມ 8: 28- 30</u>

*28ພວກເຮົາຮູ້ແລ້ວວ່າພຣະເຈົ້າຊົງຮ່ວມກັບຄົນທັງຫລາຍທີ່ຮັກພຣະອົງ ເພື່ອໃຫ້ເກີດຜົນດີໃນທຸກສິ່ງ ຄືຄົນທັງປວງ*
*ທີ່ພຣະອົງຊົງເອີ້ນໄວ້ຕາມພຣະປະສົງຂອງພຣະອົງ. 29ດ້ວຍວ່າຄົນທັງຫລາຍທີ່ພຣະອົງໄດ້ຊົງສັງເກດຮູ້ລ່ວງໜ້າແລ້ວ*
*ນັ້ນ ພຣະອົງກໍໄດ້ຊົງກຳນົດໄວ້ກ່ອນ ເພື່ອໃຫ້ເປັນຕາມແບບລັກສະນະແຫ່ງພຣະບຸດຂອງພຣະອົງເພື່ອພຣະບຸດນັ້ນຈະ*
*ໄດ້ເປັນບຸດກົກໃນຖ້າມກາງພວກນ້ອງທັງຫລາຍ. 30ແລະບັນດາຜູ້ທີ່ພຣະອົງໄດ້ຊົງກຳນົດໄວ້ລ່ວງໜ້າແລ້ວນັ້ນ ພຣະ*
*ອົງກໍໄດ້ຊົງເອີ້ນມາດ້ວຍແລະຜູ້ທີ່ພຣະອົງຊົງເອີ້ນມານັ້ນ ພຣະອົງກໍຊົງຖືເປັນຄົນຊອບທັມ ແລະຜູ້ທີ່ພຣະອົງຊົງຖືວ່າ*
*ເປັນຄົນຊອບທັມນັ້ນ ພຣະອົງກໍຊົງໂຜດໃຫ້ມີສະຫງ່າຣາສີດ້ວຍ.*

ຫຼາຍຕໍ່ຫຼາຍຄັ້ງຄຣິສຕຽນມັກຈະສັບສົນກັບສະຖານະການຂອງຊີວິດ.ສິ່ງນີ້ເກີດຂຶ້ນເພາະຄາດຫວັງສິ່ງທີ່ຜິດຈາກຊີວິດແລະຈາກພຣະເຈົ້າ. ຖ້າພວກເຮົາລືມມຸດວ່າຈຸດມຸ້ງໝາຍຂອງພຣະເຈົ້າແມ່ນເຮັດໃຫ້ພວກເຮົາດີໃຈ, ພວກເຮົາຈະ

ສັບສົນເມື່ອພວກເຮົາປະເຊີນໜ້າກັບສິ່ງທີ່ບໍ່ເປັນໜ້າພໍໃຈ. ຖ້າສົມມຸດວ່າພຣະເຈົ້າຕ້ອງການໃຫ້ພວກເຮົາປະສົບຜົນສຳເຣັດແລະສຸກຂະພາບດີ, ພວກເຮົາຈະມຶນງົງທີ່ສຸດເມື່ອພວກເຮົາຕົກງານຫຼືເປັນພະຍາດ. ເຖິງຢ່າງໃດກໍຕາມ, ຖ້າພວກເຮົາເຂົ້າໃຈສິດທິພິເສດຂອງພຣະເຈົ້າໃນຊີວິດຂອງພວກເຮົາ, ຈາກນັ້ນການດຳເນີນງານຂອງພຣະອົງຈະສົມບູນແບບໃນຄວາມຮູ້ສຶກຂອງພວກເຮົາ.

ອາຈານໂປໂລບໍ່ໄດ້ເວົ້າວ່າທຸກໆສະພາບການຂອງເຮົາເປັນການດີ. ທ່ານໄດ້ອະທິບາຍວ່າພຣະເຈົ້າໄດ້ຊົງທຳງານທຸກສະພາບການທຸກຢ່າງເພື່ອໃຫ້ເກີດຜົນດີ. ເມື່ອທ່ານຮັກພຣະເຈົ້າແລະເດີນໄປກັບພຣະອົງທຸກໆບາດກ້າວ, ພຣະອົງສາມາດນຳເອົາການດີມາຈາກທຸກໆສະພາບການໃນຊີວິດຂອງທ່ານ.

ແຕ່ອັນໃດເປັນ "ການດີ" ທີ່ພຣະເຈົ້າຊົງສ້າງຂຶ້ນ? ເບິ່ງຄືເປັນຂໍ້ຕໍ່ໄປ:"ຄົນທັງຫລາຍທີ່ພຣະອົງໄດ້ຊົງສັງເກດຮູ້ລ່ວງໜ້າແລ້ວນັ້ນ ພຣະອົງກໍໄດ້ຊົງກຳນົດໄວ້ກ່ອນ ເພື່ອໃຫ້ເປັນຕາມແບບລັກສະນະແຫ່ງພຣະບຸດຂອງພຣະອົງ." ຄຸນຄວາມດີພຣະເຈົ້າຍິ່ງໃຫ່ຍ່ສາມາດເຮັດເພື່ອທ່ານແມ່ນເຮັດໃຫ້ທ່ານເໝືອນພຣະເຢຊູ.

- ດ້ວຍເຫດຜົນທີ່ທ່ານອາດຈະຕົກງານແລະຮຽນທີ່ຈະອະທິຖານເໝືອນພຣະເຢຊູ.
- ດ້ວຍເຫດຜົນທີ່, ທ່ານອາດອິດທົນຕໍ່ຄວາມຮູ້ສຶກເສັຽໃຈກັບການຟູມເຟືອຍຂອງລູກໆ, ຈຶ່ງພັດທະນາຄວາມຮັກຂອງພໍ່ແມ່ທີ່ຍອມໃຊ້ຈ່າຍຣາຄາແພງເພື່ອພັນທະກິດໃຫ້ກັບເຂົາໃນຄຣິສຈັກຂອງທ່ານ.
- ທ່ານອາດຕິດໂຣກປ່ວຍຈົນຖືກກັກບໍ່ຣິເວນ, ແມ່ນມັນເຮັດໃຫ້ທ່ານຖ່ອມຕົວແລະອົດທົນ.

ສະຖານະການບັນຫາຂອງທ່ານອາດຈະປາກົດອອກມາໃຫ້ເຫັນເໝືອນເປັນສິ່ງທີ່ບໍ່ດີ, ແຕ່ອຸປະນິສັຍຂອງທ່ານເຕີບໂຕຂຶ້ນໃນຄວາມເໝືອນພຣະຄຣິດ. ວິທີທາງນຶ່ງທີ່ສະຖານະການບັນຫາຂອງທ່ານແມ່ນຜູກມັດພຣະປະສົງຂອງພຣະເຈົ້າເພື່ອທ່ານຈະເປັນເໝືອນພຣະຄຣິດ ແລະພຣະອົງຈະໃຊ້ສະຖານະການບັນຫາຂອງທ່ານເຮັດໃຫ້ທ່ານຄ້າຍຄືພຣະອົງ.ໂດຍທົ່ວໄປ, ເຣື່ອງນີ້ບໍ່ໄດ້ໝາຍຄວາມວ່າທ່ານຈະບໍ່ອະທິຖານຕໍ່ພຣະເຈົ້າແກ້ບັນຫາສະຖານະການເຫຼົ່ານັ້ນ.ອະທິຖານເພື່ອງານໃໝ່, ອະທິຖານເພື່ອສຸກະພາບ. ແຕ່ເມື່ອທ່ານອະທິຖານ, ໃຫ້ພຣະເຈົ້າໃຊ້ສະຖານະການບັນຫາເຫຼົ່ານັ້ນເຮັດໃຫ້ທ່ານປະພຶດຕົວແລະມີຄວາມຄິດຄືພຣະເຢຊູຄຣິດຫຼາຍຂຶ້ນ.

ສະຖານະການບັນຫາຍາກລຳບາກອາດດຶງດູດໃຈເຮົາໂດຍການອັດສະຈັນ, ແຕ່ພວກເຂົາບໍ່ເຄີຍເຫັນພຣະເຈົ້າຈັດຕຽມ. ພຣະເຈົ້າສາມາດເຮັດໃຫ້ສະຖານະການສິ່ງທີ່ໜ້າຢ້ານກົວແລະນຳເອົາສິ່ງທີ່ດີອອກຈາກສະຖານະການນັ້ນ. ຂໍ້ສຳຄັນແມ່ນເຮັດໃຫ້ພວກເຮົາຄືພຣະເຢຊູຄຣິດຫຼາຍຂຶ້ນ ຄວາມຈິງແມ່ນພວກເຮົາໂນ້ມອ່ຽງໄປທາງການເຕີບໂຕຫຼາຍກວ່າເມື່ອພົບເສັ້ນທາງທີ່ເຕັມໄປດ້ວຍບັນຫາຫຼາຍກວ່າເມື່ອຢູ່ໃນເສັ້ນທີ່ທາງທີ່ສະດວກສະບາຍ. ດັ່ງນັ້ນພວກເຮົາບໍ່ຄວນແປກໃຈເມື່ອພຣະເຈົ້າໃຊ້ເສັ້ນທາງທີ່ເຕັມໄປດ້ວຍບັນຫາເຫຼົ່ານັ້ນໃນຊີວິດຂອງເຮົາ.

## 3. <u>ໂຣມ 8: 31- 32</u>

*31 ຖ້າເປັນຢ່າງນັ້ນເຮົາທັງຫຼາຍຈະວ່າຢ່າງໃດກ່ຽວກັບເຣື້ອງນີ້ ຖ້າພຣະເຈົ້າຊົງຢູ່ຝ່າຍພວກເຮົາໃຜຈະຕໍ່ສູ້ເຮົາ. 8 ພຣະອົງຜູ້ບໍ່ໄດ້ຊົງຫວງພຣະບຸດຂອງພຣະອົງເອງ ແຕ່ໄດ້ຊົງປະທານພຣະບຸດນັ້ນໄວ້ເພື່ອປໂຍດແກ່ເຮົາທັງຫຼາຍ ຖ້າເປັນດັ່ງນັ້ນພຣະອົງຈະບໍ່ຊົງໂຜດປະທານສິ່ງສາຣະພັດໃຫ້ພວກເຮົາດ້ວຍກັນກັບພຣະບຸດນັ້ນຫຼື.*

ນຶ່ງໃນຄວາມຄິດທີ່ລ້ຳຄ່າທີ່ສຸດໃນພາສາອັງກຣິດແມ່ນສິ່ງນີ້: ພຣະເຈົ້າຢູ່ຝ່າຍເຮົາ! ເພາະວ່າຄວາມຈິງນຶ່ງຈະນຳເຮົາຄິດເຖິງຄວາມເປັນນິຣັນຢ່າງຈິງຈັງແລະເລິກເຊິ່ງ! ທີ່ຈະໃຫ້ກຳລັງໃຈພວກເຮົາແລະໃຫ້ພວກເຮົາກ້າຫານທີ່ຈະປະເຊີນໜ້າກັບການທ້າທາຍໃນຊີວິດຂອງເຮົາ. ຂ້າພະເຈົ້າພົບກັບຄູ່ຮັກຄຣິສຕຽນຄູ່ນຶ່ງຜູ້ໃຊ້ເວລາເປັນປີໆກັບການໝົດຮັກໃນຊີວິດແຕ່ງງານ. ພວກເຂົາພະຍາມເຮັດໃຫ້ດີຂຶ້ນ, ແຕ່ສຸດທ້າຍພວກເຂົາສູນເສັຽຄວາມຫວັງທຸກຢ່າງ, ຢ່າຮ້າງກັນ, ແລະແຍກທາງກັນໄປທາງໃຜທາງມັນ. ແມ່ນກະທັ້ງພົບວ່າພວກເຂົາໄປນະມັສການຄຣິສຕະຈັກທີ່ຕ່າງກັນ.

ສິ່ງນຶ່ງທີ່ມີຂຶ້ນ, ຄຣິສຕະຈັກທັງສອງຂອງພວກເຂົາມີຫ້ອງຮຽນປະສົບການກັບພຣະເຈົ້າ, ແລະທັງຄູ່ລົງທະບຽນສມັກ

ເຂົ້າຮຽນໃນຄວາມເອົາໃຈໃສ່ຄຣິສຕະຈັກຂອງພວກເຂົາ, ທັນທີພາຍຫຼັງທີ່ການຮຽນເລີ້ມເປີດ, ທັງສອງສາມີແລະພັລຍາມີຄວາມຮູ້ສຶກວ່າມີຄວາມຜິດໃນຄວາມເຫັນແກ່ຕົວແລະບໍ່ມີຄວາມຮັກໃນຊີວິດຄູ່ສົມຣົດ. ພວກເຂົາທັງສອງໄດ້ຮຽນຮູ້ວ່າພຣະເຈົ້າໄດ້ຈັດຕຽມທາງເດີນໄປກັບພວກເຂົາ ຜ່ານທາງຄວາມຍາກລຳບາກຂອງຊີວິດຄູ່ສົມຣົດຂອງພວກເຂົາແຕ່ພວກເຂົາບໍ່ເຄີຍເຊື້ອເຊີນພຣະອົງໃຫ້ເດີນຮ່ວມທາງກັບພວກເຂົາ. ພວກເຂົາຈັດຕຽມອາຫານກາງເວັນນັດພົບກັນແລະຂໍໂທດຊຶ່ງກັນແລະກັນ. ໃນທີ່ສຸດເຂົາໄດ້ແຕ່ງງານກັນຄືນໃໝ່ ໃນເວລານີ້ພວກເຂົາໄດ້ອະນຸຍາດໃຫ້ພຣະເຢຊູຄຣິດເຂົ້າມາຢູ່ໃນໃຈກາງສາຍສຳພັນຂອງພວກເຂົາ. ດຽວນີ້ພວກເຂົາເຂົ້າໃຈວ່າພຣະເຢຊູຄຣິດຢູ່ຝ່າຍເຂົາ, ພວກເຂົາຮູ້ອີກວ່າບໍ່ມີສິ່ງໃດແຍກເຂົາອອກເປັນຊິ້ນໆໄດ້. ເມື່ອຂ້າພະເຈົ້າພົບພວກເຂົາອີກ, ພວກເຂົາໄດ້ແຕ່ງງານໄປແລ້ວສີ່ປີແລະພວກເຂົາເປັນຄູ່ສົມຣົດທີ່ເຕັມໄປດ້ວຍຄວາມຊົມຊື່ນຍິນດີທັງໝົດໃນເຣື່ອງນີ້!

ປໂຍດຂອງພຣະຄັມພີໄດ້ລົ້ນໄຫຼດ້ວຍຄວາມຈິງທີ່ວ່າພຣະເຈົ້າຮັກພວກເຮົາ. ແມ່ນແຕ່ເມື່ອພວກເຮົາປະເຊີນໜ້າກັບສະຖານະການບັນຫາຄວາມຫຍຸ້ງຍາກ. ພວກເຮົາຈະສະແດງຕົວຢູ່ເລື້ອຍວ່າພຣະເຈົ້າບໍ່ຫ່ວງໃຍພວກເຮົາ. ອັຄສາວົກໂປໂລໄດ້ອະທິບາຍວ່າພຣະເຈົ້າໄດ້ພິສູດເວລານຶ່ງໃນອະດີດແລະທີ່ໄມ້ກາງແຂນວ່າບໍ່ມີສິ່ງໃດທີ່ພຣະອົງບໍ່ໄດ້ເຮັດເພື່ອພວກເຮົາດັ່ງນັ້ນພວກເຮົາຄວນຈະເດີນໄປກັບພຣະອົງແລະຈະປະສົບກັບຊີວິດທີ່ຄົບບໍຣິບູນ. ເມື່ອມະນຸດຕົກເປັນທາດຄວາມບາບ, ພຣະອົງບໍ່ໄດ້ຫວງແຫນພຣະບຸດອົງດຽວຂອງພຣະອົງແຕ່ຊົງປະທານພຣະບຸດເພື່ອພວກເຮົາຈະໄດ້ຊີວິດ. ເມື່ອສະຖານະການບັນຫາຂອງເຮົາເຄື່ອນໄຫວໃນພຣະປະສົງຂອງພຣະເຈົ້າ ທຸກສິ່ງພຣະເຈົ້າເຮັດໃນຊີວິດຂອງພວກເຮົາແມ່ນຕັກເຕືອນໄປດ້ວຍຄວາມຮັກຂອງພຣະອົງ. ດັ່ງນັ້ນເມື່ອພຣະເຈົ້າອະນຸຍາດໃຫ້ມີສະຖານະການບັນຫາຄວາມຫຍຸ້ງຍາກໃນຊີວິດຂອງພວກເຮົາ. ພວກເຮົາຈຳຕ້ອງທົບທວນເບິ່ງຜ່ານທາງສາຍຕາຂອງພູເຂົາທີ່ພຣະເຢຊູຖືກຄຶງທີ່ໄມ້ກາງແຂນບ່ອນທີ່ພຣະເຈົ້າປະທານພຣະບຸດສຸດທີ່ຮັກໃຫ້ພວກເຮົາ.

**ນຳໃຊ້ໃນຊີວິດ.**

ພຣະເຈົ້າທຳງານໃນຊີວິດຂອງທ່ານ ແມ່ນກະທັ້ງທ່າມກາງປະກົດການທີ່ບໍ່ມີແບບແຜນຊົ່ວຂະນະນຶ່ງເຫຼົ່ານີ້ແລະສະຖານະການບັນຫາ. ທ່ານຈະອາສັຍຢູ່ໃນຄວາມຈິງໃນອາທິດນີ້ຢ່າງໃດ? ຈົ່ງເລືອກຂໍ້ນຶ່ງແບບວິທີໃຊ້ຕໍ່ລົງໄປນີ້.

- **ການຂອບພຣະຄຸນ.** ຖ້າທ່ານກຳລັງເດີນເຂົ້າໄປໃນເຫດການທີ່ເລວຮ້າຍ, ຈົ່ງຂອບພຣະຄຸນພຣະເຈົ້າທີ່ກຳລັງໄປກັບທ່ານ. ຂອບພຣະຄຸນພຣະອົງສຳລັບຄວາມຮັກທີ່ໝັ້ນຄົງຂອງພຣະອົງ. ອ້ອນວອນຂໍພຣະເຈົ້າໃຫ້ສຳແດງອັນໃດທີ່ພຣະອົງຕ້ອງການເຮັດຢູ່ໃນຊີວິດຂອງທ່ານຜ່ານທາງສະຖານະການນີ້.

- **ການກວດສອບ.** ຈົດບັນທຶກເຫດການທີ່ເກີດຂຶ້ນຫຼືໂອກາດສຳຄັນໃນຊີວິດຂອງທ່ານເພື່ອເປັນກຸນແຈ. ກວດສອບສະຖານະການບັນຫາທີ່ນຳທ່ານໄປໃນເຫດທີ່ເກີດຂຶ້ນແລະຈົ່ງເບິ່ງວ່າພຣະເຈົ້າທຳງານຢ່າງໃດ. ພິຈາຣະນາເບິ່ງວ່າພຣະເຈົ້າໃຊ້ຊ່ວງເວລາເຫຼົ່ານັ້ນຊັກນຳທ່ານໃຫ້ເຂົ້າໃກ້ພຣະອົງຢ່າງໃດ.

- **ການແບ່ງປັນ.** ບອກເລົ່າຄືນໃນກຸ່ມຂອງທ່ານກ່ຽວກັບສະຖານະການທີ່ສັບສົນໃນຊີວິດຂອງທ່ານ. ແລ້ວຖາມຫາຄຳຕອບ ຮັບວ່າພຣະເຈົ້າອາດໃຊ້ສະຖານະການນັ້ນເພື່ອໃຫ້ສຳເຣັດພຣະປະສົງຂອງພຣະອົງຢ່າງໃດ.

ຈົ່ງຈົດຈຳ, ສະຖານະການບໍ່ໄດ້ເປັນພຽງສະຖານະການບັນຫາເທົ່ານັ້ນ! ພວກເຮົາຈຳຕ້ອງຮຽນຮູ້ເພື່ອໃຫ້ເຫັນພຣະເຈົ້າທຳງານໃນຊີວິດຂອງພວກເຮົາເຖິງແມ່ນວ່າສິ່ງນັ້ນເບິ່ງຄືວ່າບໍ່ໄປຖືກທິດຖືກທາງກໍຕາມ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**